เพื่อการคุ้มครองที่เข้มแข็ง

PCAP2 LAO PDR

For Better PIP Management

# ວາລະສານຂ່າວ PCAP2

ສະບັບທີ 10 ເດືອນ ພຶດສະພາ ປີ 2011

JICA

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງການລົງທຶນຂອງລັດ

Project for Enhancing Capacity in Public Investment Program (PIP) Management (PCAP2)

**ຂ່າວເດັ່ນ**

- ຄຳເຫັນຕອນທ້າຍໂຄງການ ພີແຄັບ 2
- ຜົນສຳເລັດດ້ານໂຄງການ ທີ່ຍາດໄດ້ໃນໄລຍະ 4 ປີ
- ບົດເພງປະເມີນຜົນການລົງທຶນລັດ
- ຈາກຄວາມຮູ້ສຶກຂອງທຸກໆຄົນ
- ຂໍ້ສັງເກດສຸດທ້າຍ

# ລາກ່ອນ ພີແຄັບ 2!!! ~ສຳມະນາສະຫຼຸບປິດໂຄງການ~

## ຄຳເຫັນຕອນທ້າຍໂຄງການ ພີແຄັບ 2

ໂຄງການ ພີແຄັບ ໄລຍະ 2 ຫຼື ພີແຄັບ 2 ຈະສິ້ນສຸດໜ້າວຽກຂອງຕົນໃນທ້າຍເດືອນ ສິງຫາທີ່ຈະມາເຖິງ. ຕະຫຼອດໄລຍະເວລາສາມປີກວ່າຜ່ານມານີ້ ເປັນການສືບຕໍ່ ພີແຄັບ 1 ເພື່ອບັນລຸຈຸດປະສົງ ແລະ ລະດັບຄາດໝາຍຂອງຕົນ, ພີແຄັບ 2 ໂດຍຮ່ວມກັບ ກົມປະເມີນຜົນ, ກົມແຜນການ ແລະ ກົມຮ່ວມມືສາກົນ ກະຊວງແຜນການ ແລະ ການລົງທຶນ ໄດ້ພ້ອມກັນສຸມເຫື່ອແຮງ ແລະ ສະຕິປັນຍາ ເຂົ້າໃນການພັດທະນາບັນດາເຄື່ອງມື, ກົນໄກ ແລະ ຂັ້ນຕອນຕ່າງໆ ຈົນອອກມາເປັນຄູ່ມື ແລະ ປື້ມແນະນຳ ເພື່ອໃຊ້ສຳລັບການຄຸ້ມຄອງໂຄງການລົງທຶນຂອງລັດ, ນອກນັ້ນແລ້ວ ຍັງໄດ້ສ້າງວິຊາການຈຳນວນໜຶ່ງໃຫ້ກາຍເປັນຄູຝຶກ ເພື່ອຝຶກອົບຮົມໃຫ້ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດ. ຜົນສຳເລັດດັ່ງກ່າວນີ້ ຍັງແມ່ນຍ້ອນໄດ້ຮັບການສະໜັບສະໜູນການຮ່ວມໄມ້ຮ່ວມມືເປັນຢ່າງດີຈາກ ພະແນກການຕ່າງໆຂັ້ນແຂວງ ໂດຍສະເພາະ ພະແນກແຜນການ ແລະ ການລົງທຶນຕະຫຼອດຮອດກົມ/ພະແນກແຜນການຂອງບັນດາກະຊວງ ແລະ ອົງການທຽບເທົ່າຕ່າງໆ. ໂດຍປະຕິບັດຕາມແຜນທີ່ໄດ້ກຳນົດໄວ້, ຄະນະຮັບຜິດຊອບ ພີແຄັບ 2 ( ທີມງານທັງຝ່າຍ ຜທ ແລະ ຝ່າຍໂຄງການ) ໄດ້ມີຄວາມພະຍາຍາມຢ່າງສູງ ເພື່ອເຮັດໃຫ້ການຄຸ້ມຄອງໂຄງການລົງທຶນຂອງລັດໃນ ສປປ ລາວມີປະສິດທິພາບ ແລະ ປະສິດທິຜົນຂຶ້ນໄປເທື່ອລະກ້າວ ເພື່ອປະກອບສ່ວນໃນການສ້າງສາພັດທະນາປະເທດຊາດ ກໍຄື ການບັນລຸເປົ້າໝາຍຂອງແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ທີ່ພັກ ແລະ ລັດຖະບານໄດ້ກຳນົດອອກໃນແຕ່ລະໄລຍະ, ໂດຍສະເພາະໄລຍະນີ້ ແມ່ນການບັນເປົ້າໝາຍສະຫັດສະວັດ ( 2015 ), ແລະ ການນຳພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບຂອງປະເທດດ້ອຍພັດທະນາ (2020).

ແນວໃດກໍຕາມບັນດາໝາກຜົນທີ່ບັນລຸໄດ້ນັ້ນ ຖ້າທຽບໃສ່ກັບຄວາມຮຽກຮ້ອງຕ້ອງການຂອງວຽກງານແລ້ວ ຍັງບໍ່ທັນພຽງພໍໃນການຄຸ້ມຄອງທີ່ມີປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງເທື່ອ, ສະນັ້ນ ມັນຍັງມີຄວາມຈຳເປັນຕ້ອງໄດ້ສືບຕໍ່ພັດທະນາໃຫ້ມີຄວາມສອດຄ່ອງກັບສະພາບການໃນແຕ່ລະໄລຍະ ແລະ ຜັນຂະຫຍາຍໄປສູ່ລວງກວ້າງ ແລະ ລວງເລິກຕື່ມອີກ. ເພື່ອສືບຕໍ່ວຽກງານດັ່ງກ່າວນີ້ ຂ້າພະເຊື່ອວ່າ ຈະໄດ້ຮັບການສືບຕໍ່ສະໜັບສະໜູນທາງດ້ານງົບປະມານ ແລະ ວິຊາການຕື່ມອີກຈາກລັດຖະບານຍີ່ປຸ່ນ ( ອົງການ ໄຈກາ ) ເພື່ອສຳເລັດວຽກງານທີ່ຍັງຄ້າງຄາ ເປັນຕົ້ນແມ່ນການ ຜັນຂະຫຍາຍໄປສູ່ຂັ້ນເມືອງ, ການສືບຕໍ່ປັບປຸງວຽກງານການຄຸ້ມຄອງການເງິນການລົງທຶນລັດເປັນຕົ້ນ.

ດັ່ງບັນດາທ່ານຮັບຮູ້ແລ້ວວ່າ ເຄື່ອງມື ແລະ ວິທີການ ຈະດີປານໃດກໍຕາມ ກໍ່ຈະບໍ່ມີປະໂຫຍດ ຖ້າຫາກບໍ່ຖືກນຳໃຊ້, ຂ້າພະເຈົ້າຮຽກຮ້ອງມາຍັງພາກສ່ວນກ່ຽວຂ້ອງຈົ່ງນຳໃຊ້ເຄື່ອງມື ແລະ ວິທີການດັ່ງກ່າວນີ້ ເຂົ້າໃນວຽກງານຂອງຕົນຢ່າງມີປະສິດທິຜົນ.

ຂ້າພະເຈົ້າຂໍສະແດງຄວາມຂອບໃຈຢ່າງສູງມາຍັງຄະນະຮັບຜິດຊອບໂຄງການ, ພະນັກງານວິຊາການ ຜທ, ທີມງານຊ່ຽວຊານຍີ່ປຸ່ນ,ທີ່ປຶກສາພາຍໃນ ທີ່ໄດ້ໃຊ້ຄວາມພະຍາຍາມຢ່າງສູງໃນການສ້າງບັນດາເຄື່ອງມື ແລະ ວິທີການດັ່ງກ່າວ

ຂໍຂອບໃຈບັນດາພະນັກງານພະແນກແຜນການແລະການລົງທຶນຂອງບັນດາກະຊວງ ແລະ ອົງການທຽບເທົ່າກໍຄືບັນດາແຂວງຕ່າງໆ ທີ່ໃຫ້ຄວາມຮ່ວມມືເປັນຢ່າງດີ ຈົນເຮັດໃຫ້ໂຄງການນີ້ສຳເລັດດ້ວຍໝາກຜົນທີ່ຈົບງາມ.

ຂໍຂອບໃຈຕໍ່ອົງການຮ່ວມມືສາກົນຍີ່ປຸ່ນປະຈຳລາວ ແລະ ຜ່ານອົງການໄຈກ້າໄປຍັງລັດຖະບານຍີ່ປຸ່ນກໍຄືປະຊາຊົນຍີ່ປຸ່ນ ຕໍ່ການສະໜັບສະໜູນທາງດ້ານທຶນຮອນ ແລະ ວິຊາການໃຫ້ແກ່ ພີແຄັບ 2.

ຂໍອວຍພອນໃຫ້ທຸກທ່ານຈົ່ງມີແຕ່ຄວາມສຸກຄວາມຈະເລີນໃນຊີວິດຄອບຄົວ ແລະ ໜ້າທີ່ການງານເທີ້ນ.



**ດຣ ບຸນທະວີ ສີສຸພັນທອງ**

ລັດຖະມົນຕີຊ່ວຍວ່າການ ກະຊວງແຜນການ ແລະ ການລົງທຶນ, ຜູ້ອຳນວຍການໂຄງການ ພີແຄັບ 2



**ທ່ານ ບຸນປອນ ສີສຸລາດ**
**ຮອງຫົວໜ້າກຳມາທິການເສດຖະກິດ, ແຜນການ ແລະ ການເງິນ, ສະພາແຫ່ງຊາດ**
**( ອະດີດຫົວໜ້າກົມປະເມີນຜົນ ຜທ , ອະດີດຜູ້ບໍລິຫານໂຄງການ ພີແຄັບ 2 )**

ຄືທ່ານໄດ້ຮັບຮູ້ນຳກັນແລ້ວວ່າ ພັກ ແລະ ລັດຖະບານ ເວລາໃດກໍໄດ້ເອົາໃຈໃສ່ຊີ້ນຳ ນຳພາ ປະເທດຊາດເພື່ອຫຼຸດພົ້ນອອກຈາກຄວາມເປັນປະເທດດ້ອຍພັດທະນາ. ໜຶ່ງໃນບັນດາວຽກງານທີ່ສຳຄັນທີ່ຈະນຳພາປະເທດຊາດອອກຈາກຄວາມດ້ອຍພັດທະນານັ້ນ ແມ່ນການຄຸ້ມຄອງການລົງທຶນລັດຢ່າງມີປະສິດທິພາບ ແລະ ປະສິດທິຜົນ. ແຕ່ກ່ອນທີ່ຍັງບໍ່ທັນມີໂຄງການເສີມສ້າງຄວາມສາມາດໃນການຄຸ້ມຄອງການລົງທຶນລັດ (ພີແຄັບ )ນັ້ນ ການຄຸ້ມຄອງໂຄງການແມ່ນມີຄວາມຫຍຸ້ງຍາກຫຼາຍ ທັງນີ້ ແມ່ນຍ້ອນຂາດເຂີນບັນດາເຄື່ອງມື, ວິທີການ ແລະ ນິຕິກຳຕ່າງໆ, ພະນັກງານຈຳນວນຫຼາຍ ກໍຍັງຂາດຄວາມຮູ້ ແລະ ປະສົບການທີ່ແນ່ນອນ. ໂຄງການ ພີແຄັບ ແມ່ນເຂົ້າມາພໍດີກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ ການຄຸ້ມຄອງການລົງທຶນລັດຂອງ ສປປລາວ. ນັບແຕ່ວັນເລີ່ມຕົ້ນຂອງ ພີແຄັບ 1 ຈົນມາຮອດຕອນທ້າຍຂອງ ພີແຄັບ 2 ເຫັນໄດ້ວ່າ ການຄຸ້ມຄອງການລົງທຶນລັດ ໄດ້ມີຄວາມເຂັ້ມແຂງຂຶ້ນໄປເລື້ອຍໆ ຈາກຈຸດບໍ່ທັນມີເຄື່ອງມື ແລະ ວິທີການທີ່ເປັນມາດຕະຖານ ແລະ ຈາກທີ່ພະນັກງານຈຳນວນຫຼາຍຂາດບົດຮຽນກ່ຽວກັບການຄຸ້ມຄອງການລົງທຶນລັດມາຮອດປະຈຸບັນເຫັນວ່າມີເຄື່ອງມື ແລະ ວິທີການໄດ້ຖືກພັດທະນາຂຶ້ນຢ່າງເປັນລະບົບ ແລະຕໍ່ເນື່ອງ, ໄດ້ມີການຝຶກອົບຮົມໃຫ້ແກ່ບັນດາພະນັກງານກ່ຽວຂ້ອງ ເຮັດໃຫ້ຈຳນວນພະນັກງານທີ່ຮູ້ວຽກກ່ຽວກັບການຄຸ້ມຄອງການລົງທຶນລັດທັງຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ມີປະລິມານເພີ່ມຂຶ້ນ. ມາຮອດປະຈຸບັນບັນດາເຄື່ອງມືດັ່ງກ່າວ ໄດ້ຄ່ອຍເຊື່ອມຊຶມເຂົ້າໄປໃນບັນດາກະຊວງຕ່າງໆ, ແຂວງ, ເມືອງ ຕະຫຼອດຮອດກຸ່ມບ້ານ ແລະ ບ້ານ.

ການເຮັດວຽກຂອງ ພີແຄັບ 2, ນອກຈາກການຮຽນຮູ້ຕົວຈິງ ຢູ່ບ້ານເຮົາແລ້ວ ຍັງໄດ້ໄປຖອດຖອນບົດຮຽນຢູ່ປະເທດທີສາມອີກ ເຊັ່ນ ປະເທດ ສສ ຫວຽດນາມ ແລະ ປະເທດ ມາເລເຊຍ ເພື່ອຮຽນຮູ້ຈາກປະເທດເພື່ອນບ້ານທີ່ພັດທະນາແລ້ວມາໝູນໃຊ້ເຂົ້າກັບສະພາບຕົວຈິງຂອງບ້ານເຮົາ. ແນວໃດກໍຕາມ ໝາກຜົນທັງໝົດທີ່ໄດ້ຮັບຈາກໂຄງການ ເມື່ອທຽບກັບຄວາມຮຽກຮ້ອງຕ້ອງການແລ້ວເຫັນວ່າຍັງມີຄວາມຈຳເປັນຕ້ອງໄດ້ສືບຕໍ່ປັບປຸງຕື່ມອີກ ເພື່ອໃຫ້ສອດຄ່ອງກັບສະພາບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະ. ການສືບຕໍ່ເຜີຍແຜ່ໄປສູ່ບັນດາອົງການຈັດຕັ້ງຕ່າງໆຂັ້ນສູນກາງ ແລະ ຂັ້ນເມືອງແມ່ນຍັງມີຄວາມຈຳເປັນ. ນອກຈາກນັ້ນ, ໃນອະນາຄົດຄວນຕ້ອງໄດ້ພິຈາລະນາເອົາເຂົ້າສູ່ຫຼັກສູດການສິດສອນຕາມໂຮງຮຽນ ເພື່ອປູກຈິດສຳນຶກກ່ຽວກັບການຄຸ້ມຄອງການລົງທຶນລັດແຕ່ຍັງໜຸ່ມໜ້ອຍ.

ຕະຫຼອດໄລຍະເວລາ ພີແຄັບ 2 ໄດ້ເດີນທາງໄປຖອດຖອນບົດຮຽນທີ່ປະເທດທີສາມ 02 ຄັ້ງ ຄື ປະເທດຫວຽດນາມ ໃນປີ 2008 ແລະ ປະເທດ ມາເລເຊຍໃນປີ 2011 ເພື່ອແລກປ່ຽນບົດຮຽນກ່ຽວກັບການຄຸ້ມຄອງການລົງທຶນລັດ, ຜ່ານຈາກການຖອດຖອນບົດຮຽນ ພວກເຮົາກໍສາມາດເຫັນໄດ້ບາງບົດຮຽນ ທີ່ເຫັນວ່າມີຄວາມຄ້າຍຄື ແລະ ອາດສາມາດນຳໃຊ້ເຂົ້າ ກັບບ້ານເຮົາໄດ້ ເຊັ່ນ ບົດຮຽນການແກ້ໄຂຄວາມທຸກຍາກ ເປັນຕົ້ນ.

ໃນໂອກາດທີ່ຈະສິ້ນສຸດໂຄງການນີ້, ໃນນາມຜູ້ບໍລິຫານໂຄງການ ພີແຄັບ 2 ຂ້າພະເຈົ້າຂໍສະແດງຄວາມຂອບໃຈຢ່າງສູງມາຍັງຄະນະຮັບຜິດຊອບໂຄງການ, ພະນັກງານວິຊາການ ຜທ, ທີມງານຊ່ຽວຊານຍີ່ປຸ່ນ,ທີ່ປຶກສາພາຍໃນ ທີ່ໄດ້ໃຊ້ຄວາມພະຍາຍາມຢ່າງສູງໃນການສ້າງບັນດາເຄື່ອງມື ແລະ ວິທີການດັ່ງກ່າວ ຂອບໃຈບັນດາພະນັກງານພະແນກແຜນການແລະການລົງທຶນຂອງບັນດາກະຊວງ ແລະ ອົງການທຽບເທົ່າກໍຄືບັນດາແຂວງຕ່າງໆ ຕໍ່ການໃຫ້ຄວາມຮ່ວມມືເປັນຢ່າງດີ ຈົນເຮັດໃຫ້ໂຄງການນີ້ສຳເລັດລົງດ້ວຍໝາກຜົນທີ່ຈົບງາມ.

ຂໍຂອບໃຈຕໍ່ອົງການຮ່ວມມືສາກົນຍີ່ປຸ່ນປະຈຳລາວ ແລະ ຜ່ານອົງການໄຈກ້າໄປຍັງລັດຖະບານກໍຄືປະຊາຊົນຍີ່ປຸ່ນ ຕໍ່ການສະໜັບສະໜູນທາງດ້ານທຶນຮອນ ແລະ ເຕັກນິກວິຊາການໃຫ້ແກ່ໂຄງການດັ່ງກ່າວ.

ຂໍອວຍພອນໃຫ້ທຸກທ່ານຈົ່ງມີຄວາມສຸກຄວາມຈະເລີນໃນຄອບຄົວ ແລະ ໜ້າທີ່ການງານເທີ້ນ.




# ຮອງຫົວໜ້າອົງການຮ່ວມມືສາກົນຍີ່ປຸ່ນ ປະຈຳລາວ

ໃນເດືອນສິງຫາ ປີ 2011 ໂຄງການເສີມສ້າງຄວາມສາມາດໃນການຄຸ້ມຄອງບໍລິຫານວຽກງານໂຄງການລົງທຶນຂອງລັດ 2 (PCAP 2) ທີ່ໄດ້ເລີ່ມດຳເນີນແຕ່ເດືອນມີນາ ປີ 2008 ກໍໄດ້ສິ້ນສຸດລົງ. ຂໍສະແດງຄວາມຂອບໃຈມາຍັງ ກະຊວງແຜນການ ແລະ ການລົງທຶນ, ບັນດາພະແນກແຜນການ ແລະ ການລົງທຶນແຂວງ ລວມທັງ ບັນດາພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ໃຫ້ການຮ່ວມມືໃນການດຳເນີນໂຄງການຕະຫຼອດມາ.

ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 7 (7th NSEDP: National Socio-Economic Development Plan 2011– 2015) ໄດ້ກຳນົດເປົ້າໝາຍການພັດທະນາປະເທດໄລຍະຍາວຄື: ສປປ ລາວ ຈະຕ້ອງບັນລຸໄດ້ເປົ້າໝາຍສະຫັດສະວັດ ພາຍໃນປີ 2015 ແລະ ຫຼຸດພົ້ນອອກຈາກຄວາມເປັນປະເທດດ້ອຍພັດທະນາ ພາຍໃນປີ 2020; ຊຶ່ງໃນນັ້ນວຽກງານໂຄງການລົງທຶນແຫ່ງລັດ (PIP: Public Investment Program) ກໍຖືເປັນເຄື່ອງມືໜຶ່ງທີ່ສຳຄັນ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມດັ່ງກ່າວ ໃຫ້ມີປະສິດທິຜົນ ເພື່ອໃຫ້ບັນລຸໄດ້ເປົ້າໝາຍການພັດທະນາປະເທດໃນໄລຍະຍາວ. ໂດຍເຫັນໄດ້ຄວາມສຳຄັນດັ່ງກ່າວ ເປັນເວລາເກືອບ 7 ປີ ທີ່ປະເທດຍີ່ປຸ່ນຮ່ວມກັບກະຊວງແຜນການ ແລະ ການລົງທຶນ ໄດ້ເອົາໃຈໃສ່ປະຕິບັດໂຄງການຍົກລະດັບຄວາມສາມາດໃນການຄຸ້ມຄອງໂຄງການລົງທຶນຂອງລັດ (PCAP) (ເດືອນ 11/ 2004 - 10/2007) ແລະ ໂຄງການເສີມສ້າງຄວາມສາມາດໃນການຄຸ້ມຄອງໂຄງການລົງທຶນຂອງລັດ (PCAP 2) (ເດືອນ 3/ 2008 - 8/2011); ແນໃສ່ເພື່ອໃຫ້ "ການກວດກາ, ຕິດຕາມ ແລະ ປະເມີນຕີລາຄາວຽກງານໂຄງການລົງທຶນ ທີ່ຢູ່ພາຍໃຕ້ການຊີ້ນຳຂອງລັດຖະບານລາວ ເປັນໄປຢ່າງຖືກຕ້ອງເໝາະສົມ".

ຕາມຜົນການປະເມີນປິດໂຄງການ PCAP2 ໃນໄລຍະຜ່ານມາ ເຫັນໄດ້ວ່າໂຄງການສາມາດຍາດໄດ້ຜົນສຳເລັດໃຫຍ່ຄື: ໄດ້ປະກອບສ່ວນເຂົ້າໃນການຍົກລະດັບຄວາມສາມາດໃນການຄຸ້ມຄອງວຽກງານໂຄງການລົງທຶນຂອງລັດໃຫ້ແກ່ກະຊວງແຜນການ ແລະ ການລົງທຶນ ລວມທັງບັນດາພະແນກແຜນການ ແລະ ການລົງທຶນແຂວງ ໂດຍຜ່ານການພັດທະນາ, ປັບປຸງແກ້ໄຂ ແລະ ເຜີຍແຜ່ວິທີການ ແລະຄູ່ມືແນະນຳ ເພື່ອກວດກາ, ຕິດຕາມ ແລະ ປະເມີນຕີລາຄາໂຄງການ ລວມທັງຜ່ານການຈັດຝຶກອົບຮົມ. ພ້ອມກັນນັ້ນ, ອີງຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ທີ່ໄດ້ອອກໃນປີ 2009 ຊຶ່ງໄດ້ກຳນົດເອົາການກວດກາວຽກງານໂຄງການລົງທຶນຂອງລັດ ເປັນໜຶ່ງຂໍ້ບັງຄັບທີ່ຕ້ອງໄດ້ປະຕິບັດ; ຊຶ່ງບັນດາວິທີການ ແລະ ຄູ່ມືທີ່ໄດ້ຮັບການພັດທະນາພາຍໃຕ້ໂຄງການ ຖືໄດ້ວ່າເປັນທີ່ຍອມຮັບໃນການນຳໃຊ້ຕາມລະບຽບກົດໝາຍ.

ໃນຕໍ່ໜ້າ, ເພື່ອໃຫ້ການຄຸ້ມຄອງໂຄງການລົງທຶນຂອງລັດດີຍິ່ງໆຂຶ້ນນັ້ນ ກະຊວງແຜນການ ແລະ ການລົງທຶນ ແລະ ອົງການຮ່ວມມືສາກົນຍີ່ປຸ່ນໄດ້ເຫັນເປັນເອກະພາບກັນວ່າ ການສ້າງຄວາມສາມາດໃນການຄຸ້ມຄອງໂຄງການລົງທຶນຂອງລັດ ພາຍໃຕ້ຂອບການວາງແຜນໄລຍະກາງ ແລະ ການຄຸ້ມຄອງດ້ານການເງິນ ແມ່ນເປັນສິ່ງທີ່ຈຳເປັນ; ຊຶ່ງທາງອົງການຮ່ວມມືສາກົນຍີ່ປຸ່ນມີຄວາມປະສົງສືບຕໍ່ໃຫ້ການຊ່ວຍເຫຼືອ ຜ່ານການສ້າງຄວາມສາມາດໃນການຄຸ້ມຄອງວຽກງານໂຄງການລົງທຶນຂອງລັດ ແນໃສ່ເພີ່ມທະວີຄວາມໂປ່ງໃສ ແລະ ຄວາມໜ້າເຊື່ອຖືໃຫ້ແກ່ວຽກງານໂຄງການລົງທຶນຂອງລັດ ກໍຄືໃຫ້ແກ່ລັດຖະບານລາວ.

# ຜົນສຳເລັດຂອງໂຄງການ ທີ່ຍາດໄດ້ໃນໄລຍະ 4 ປີ

ການປະເມີນຕອນທ້າຍໂຄງການ ໄດ້ຖືກປະເມີນໂດຍສຳນັກງານໃຫຍ່ ແລະ ອົງການຮ່ວມມືສາກົນຍີ່ປຸ່ນ ຫ້ອງການປະຈຳລາວ ໃນຊ່ວງໄລຍະ 19/6-2/7/2011. ໃນວາລະສານສະບັບນີ້ ໄດ້ປະເມີນຜົນສຳເລັດດ້ານໂຄງການ ຕາມຕົວຊີ້ວັດຂອງ PDM ຂອງການປະເມີນປິດໂຄງການຍັງບໍ່ສາມາດປະເມີນຜົນໄດ້ໝົດ. (ຜົນສຳເລັດ 1-4 ແມ່ນສອດຄ່ອງກັບແຕ່ລະຜົນສຳເລັດຂອງ PDM)

## ຜົນສຳເລັດ 1

"ການທີ່ບັນດາພະນັກງານກົມແຜນການຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນໃນທົ່ວປະເທດ ໄດ້ຮັບຄວາມຮູ້- ເຕັກນິກວິຊາການ ກ່ຽວກັບການຄຸ້ມຄອງໂຄງການລົງທຶນຂອງລັດ (PIP) ໂດຍລວມ - ໂດຍພື້ນຖານ" ຖືໄດ້ວ່າເປັນໜຶ່ງໃນຜົນສຳເລັດໃຫຍ່ທີ່ບັນລຸໄດ້ເປົ້າໝາຍຂອງໂຄງການ PCAP2; ໃນນັ້ນ ເພື່ອໃຫ້ສາມາດບັນລຸໄດ້ເປົ້າໝາຍດັ່ງກ່າວ ກະຊວງແຜນການ ແລະ ການລົງທຶນ ໄດ້ຂຶ້ນແຜນຖ່າຍທອດເຕັກນິກວິຊາການໃນທົ່ວຂະແໜງແຜນການຂັ້ນສູນກາງ ແລະ ຂັ້ນແຂວງ ໂດຍນຳໃຊ້ການຝຶກອົບຮົມ ແລະ ການຝຶກຫັດຜ່ານການປະຕິບັດຕົວຈິງ (OJT) ເປັນຫຼັກ; ຊຶ່ງພາຍໃນເວລາ 3 ປີເຄິ່ງ ໄດ້ສຳເລັດການຈັດຝຶກອົບຮົມ ແລະ ຈັດສຳມະນາ ກ່ຽວກັບການຄຸ້ມຄອງ PIP ຂະໜາດໃຫຍ່ 3 ຄັ້ງ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 3,777 ຄົນ. ໃນປີສຸດທ້າຍຂອງໂຄງການ PCAP2 ກະຊວງແຜນການ ແລະ ການລົງທຶນໄດ້ມອບອາຈານສິດສອນເພື່ອເປັນຕົວແບບ ໃຫ້ແກ່ພະແນກແຜນການແຂວງ; ຊຶ່ງໄດ້ດຳເນີນການຊີ້ນຳດ້ານເຕັກນິກວິຊາການ ດຳເນີນການຝຶກອົບຮົມ ກ່ຽວກັບການຄຸ້ມຄອງບໍລິຫານ PIP ໃຫ້ແກ່ຫົວໜ້າໂຄງການ PIP ໃນແຕ່ລະແຂວງ ໂດຍຖືເອົາພະນັກງານກົມແຜນການໃນທົ່ວປະເທດເປັນໃຈກາງ. (ໄທຣະ)

## ຜົນສຳເລັດ 2

ຕິດພັນກັບການນຳໃຊ້ວິທີການຄຸ້ມຄອງການເງິນງົບປະມານ ແລະ ສ້າງເປັນລະບຽບການນັ້ນ ແມ່ນໄດ້ພັດທະນາບັນດາເຄື່ອງມືຄຸ້ມຄອງທາງດ້ານການເງິນ ແລະ ຈັດການຝຶກອົບຮົມ ຕາມຄາດໝາຍເບື້ອງຕົ້ນ. ໃນນັ້ນ, ກ່ຽວກັບການພັດທະນາເຄື່ອງມືຄຸ້ມຄອງດ້ານການເງິນ ແມ່ນໄດ້ຮ່ວມກັບພະນັກງານກະຊວງແຜນການ ແລະ ການລົງທຶນ ລົງຢ້ຽມຢາມຫຼາຍແຂວງ ເພື່ອໃຫ້ກຳໄດ້ສາເຫດຂອງປັນຫາດ້ານການເງິນ ຜ່ານການຮັບຟັງບັນດາພາກສ່ວນກ່ຽວຂ້ອງ ແລະ ຜູ້ຮັບເໝົາໂຄງການ. ສິ່ງດັ່ງກ່າວເຮັດໃຫ້ພະນັກງານກະຊວງແຜນການ ແລະ ການລົງທຶນມີຄວາມເຂົ້າໃຈຕໍ່ກັບປັນຫາດ້ານການເງິນໄດ້ເລິກເຊິ່ງກວ່າເກົ່າ, ຊຶ່ງຖືໄດ້ວ່າເປັນຜົນສຳເລັດໃຫຍ່ໜຶ່ງ. ພ້ອມກັນນັ້ນ, ເຄື່ອງມືການຄຸ້ມຄອງທາງການເງິນ ແມ່ນຖືເອົາເຄື່ອງມືທີ່ໄດ້ຮັບປະສິດທິຜົນທີ່ສຸດໃນການຄຸ້ມຄອງການເງິນໃນແຂວງ; ຊຶ່ງຫວັງວ່າການນຳໃຊ້ເຄື່ອງມືດັ່ງກ່າວ ຈະສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງດ້ານການເງິນໃນທົ່ວປະເທດ ໃນຕໍ່ໜ້າ. (ຄູໂຣດະ)

## ຜົນສຳເລັດ 3

ຜ່ານການເຮັດວຽກເປັນເວລາຫຼາຍປີຂອງກະຊວງແຜນການ ແລະ ການລົງທຶນ ໃນເດືອນທັນວາ ປີ 2009 "ກົດໝາຍວ່າດ້ວຍການລົງທຶນຂອງລັດ" ກໍໄດ້ຖືກຮັບຮອງ. ພາຍໃຕ້ຂອບຂອງກົດໝາຍດັ່ງກ່າວ ໄດ້ເຮັດໃຫ້ວຽກງານການຄຸ້ມຄອງໂຄງການລົງທຶນລັດ ໄດ້ມີບາດກ້າວຂະຫຍາຍຕົວ ຢ່າງທີ່ບໍ່ເຄີຍມີມາກ່ອນ; ຊຶ່ງໃນນາມວິຊາການ ພວກຂ້າພະເຈົ້າເຫັນໄດ້ວ່າໄດ້ຮັບປະສິດທິຜົນເກີນຄາດໝາຍ ໂດຍເຫັນໄດ້ໃນເວລາບັນລະຍາຍຫົວຂໍ້ກົດໝາຍວ່າດ້ວຍການລົງທຶນຂອງລັດໃນວາລະການຝຶກອົບຮົມ, ຈະເຫັນວ່າບັນ ດາຜູ້ເຂົ້າຮ່ວມມີຄວາມຕັ້ງໃຈຮັບຟັງຫຼາຍ. ສະນັ້ນ, ຜົນຂອງການສືບຕໍ່ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລົງທຶນຂອງລັດ ຈະເປັນສິ່ງກະຕຸກຊຸກຍູ້ໃຫ້ວຽກງານການຄຸ້ມຄອງໂຄງການລົງທຶນຂອງລັດ . (ໂອກຸມຸຣະ)

## ຜົນສຳເລັດ 4

ປັດໃຈຊຸກຍູ້ສຳຄັນທີ່ເຮັດໃຫ້ບັນລຸຜົນສຳເລັດທີ 4 ໄດ້ນັ້ນ ແມ່ນຄວາມມີນ້ຳໃຈຮັບຜິດຊອບສູງຂອງທຸກໆພາກສ່ວນກ່ຽວຂ້ອງຕໍ່ການເຄື່ອນໄຫວຂອງໂຄງການ PCAP 2. ໂດຍເລີ່ມຈາກການນຳກະຊວງແຜນການ ແລະ ການລົງທຶນ ທີ່ໄດ້ຖືເອົາການຝຶກອົບຮົມຂອງໂຄງການ PCAP2 ເປັນໜຶ່ງໃນວຽກງານທາງການຂອງກະຊວງ ຊຶ່ງໄດ້ຈັດສົ່ງບັນດາຄູຝຶກ ແລະ ນັກຝຶກອົບຮົມ ເຂົ້າຮ່ວມ. ມາເຖິງປັດຈຸບັນ ຈຳນວນຄູຝຶກທີ່ຜ່ານການຝຶກອົບຮົມການເປັນຄູຝຶກ ລວມມີ 56 ຄົນ ທີ່ມາຈາກ 3 ກົມພາຍໃນກະຊວງແຜນການ ແລະ ການລົງທຶນ, 144 ຄົນ ຈາກພະແນກການແຜນການ ແລະ ການລົງທຶນແຂວງ (DPI) ແລະ ຜ່ານການຈັດຝຶກອົບຮົມ 3 ຄັ້ງ ມີຜູ້ເຂົ້າຮ່ວມທັງໝົດຈຳນວນ 2,396 ຄົນ ທີ່ມາຈາກບັນດາກະຊວງ, ພະແນກແຜນການ ແລະ ການລົງທຶນແຂວງ ແລະ ບັນດາຂະແໜງການຕ່າງໆ.

ໃນການຈັດຝຶກອົບຮົມໃນທົ່ວປະເທດ ແມ່ນໄດ້ຈັດໃນຮູບແບບການສຳມະນາໃນທາງປະຕິບັດແບບມີສ່ວນຮ່ວມ ໂດຍທີ່ບັນດາຜູ້ເຂົ້າຮ່ວມຈາກພະແນກແຜນການ ແລະ ການລົງທຶນແຂວງ, ກະຊວງ ແລະ ຂະແໜງການຕ່າງໆ ໄດ້ຮັບຮູ້ປັນຫາຕົວຈິງທີ່ເກີດຂຶ້ນໃນການຄຸ້ມຄອງບໍລິຫານ PIP ໄປພ້ອມກັບການຮຽນຮູ້ວິທີການນຳໃຊ້ເຄື່ອງມື PIP. ນອກຈາກນັ້ນ, ພາຍຫຼັງສຳເລັດການຝຶກອົບຮົມແລ້ວ ຄູຝຶກຈາກກະຊວງແຜນການ ແລະ ການລົງທຶນໄດ້ສືບຕໍ່ຕິດຕາມການຝຶກອົບຮົມຜ່ານການປະຕິບັດຕົວຈິງ (OJT). ຄຳຄິດຄຳເຫັນຕຳນິຕິຊົມທີ່ໄດ້ຈາກການພັດທະນາຄວາມຮູ້ ຜ່ານການໃກ້ຊິດຕິດແທດກັບຕົວຈິງນັ້ນ ໄດ້ຮັບການຜັນຂະຫຍາຍໃຫ້ກາຍມາເປັນຄູ່ມື ແລະ ປື້ມແນະນຳ.

ພ້ອມກັນນັ້ນ, ບັນດາການເຄື່ອນໄຫວທັງໝົດຂອງ PCAP2 ຈະບໍ່ສາມາດສຳເລັດໄດ້ ຖ້າປາດສະຈາກການປະສ່ວນຢ່າງຫຼວງຫຼາຍຂອງພະນັກງານວິຊາການຄົນລາວ ຜູ້ທີ່ມີຄວາມສາມາດສູງ. (ໂອຊາດະ)

# ການປະເມີນການລົງທຶນລັດ

## ~ ການປະເມີນນຳໄປສູ່ໄຊຊະນະ ! ~



ພວກທ່ານຮູ້ແລ້ວບໍ່ ວ່າພວກເຮົາມີເພງປະເມີນຜົນໂຄງການລົງທຶນລັດ!

ບົດເພງ ຊື່ວ່າ " ປະເມີນຜົນ ".

ແຕ່ງ ແລະ ຮ້ອງໂດຍ ສອນເພັດວົງສີ ບຸດພົມເມືອງ, ເຊິ່ງເປັນຜູ້ໜຶ່ງໃນທີມງານຄູຝຶກ

ແລະ ເປັນນັກຮ້ອງທີ່ມີຊື່ສຽງຜູ້ໜຶ່ງ ໃນ ສປປລາວ

### ບົດເພງປະເມີນຜົນ

ຫຼາຍປີພື້ນຜ່ານ ທຸກທ່ານຄົງເຂົ້າໃຈດີ
ວຽກງານທີ່ດີ ຕ້ອງມີການປະເມີນຜົນ
ເພື່ອຄຸນນະພາບ ການລົງທຶນມີປະສິດທິຜົນ
ເປັນວຽກງານຂອງທ່ານທຸກຄົນ ວຽກປະເມີນຜົນຕ້ອງເອົາໃສ່ໃຈ
ປະເມີນກ່ອນສ້າງ ເປັນເສັ້ນທາງຈະຮຸ່ງເຮືອງສີ
ປະໂຫຍດທີ່ມີ ຄືຄວາມສຸກຂີພີ່ນ້ອງປະຊາ
ຢູ່ທາງທ້ອງຖິ່ນ ຍັງຄອຍສິ່ງນີ້ໄປຫາ
ຄືວຽກງານການພັດທະນາ ໃຫ້ປວງປະຊາຢູ່ດີກິນດີ

ຫາກວຽກງານການພັດທະນາ ທີ່ວອານາມີການໄຕ່ຕອງ
ຮາກຖານໝັ້ນຄົງ ຈະຢືນຍົງຮຸ່ງເຮືອງກ້າວໜ້າ
ໂຄງການນ້ອຍໃຫຍ່ ຈະໄດ້ສົມດັ່ງໃຈປອງ
ຕ້ອງສຶກສາເບິ່ງຄວາມສອດຄ່ອງ ປະສິດທິພາບພ້ອມປະສິດທິຜົນ.
ປະຊາຈະພົ້ນ ຄວາມທຸກຈົນທົ່ວຖິ່ນອານາ
ຜົນກະທົບ ກໍ່ຕ້ອງສຶກສາ ເພື່ອຊອກຫາວິທີແກ້ໄຂ
ແຜນການທຸກຢ່າງ ຕ້ອງດຳເນີນຖືກຕ້ອງໂປ່ງໃສ
ຄວາມຍືນຍົງໃຫ້ຄົງເອົາໄວ້ ເສດຖະກິດຈະໄດ້ເຕີບໃຫຍ່ເຂັ້ມແຂງ

### 1. ຍ້ອນຫຍັງເຈົ້າຈຶ່ງແຕ່ງເພັງນີ້?

ກົມປະເມີນຜົນເປັນກົມໜຶ່ງທີ່ມີບົດບາດໃນການຄຸ້ມຄອງໂຄງການລົງທຶນຂອງລັດ. ໄລຍະຜ່ານມາ ຄຳວ່າ: ປະເມີນຜົນ ຍັງບໍ່ທັນເປັນທີ່ເຂົ້າໃຈກັນຢ່າງກວ້າງຂວາງ, ສະນັ້ນອົງການຈັດຕັ້ງທີ່ກ່ຽວຂ້ອງນັບທັງທ້ອງຖິ່ນຈຶ່ງດຳເນີນ ຕາມຄວາມເຂົ້າໃຈຂອງໃຜລາວ. ປະຈຸບັນ ຜທ ກໍ່ຄືກົມປະເມີນຜົນໄດ້ຮັບການສະໜັບສະໜູນຈາກລັດຖະບານຍີ່ ປຸ່ນກໍຄືໂຄງການ ພີແຄັບ ໃນການສ້າງເຄື່ອງມື ແລະ ວິທີການປະເມີນຜົນຂຶ້ນມາສຳລັບໃຊ້ເຂົ້າໃນວຽກງານຄຸ້ມຄອງໂຄງການລົງທຶນຂອງລັດ. ເພື່ອເຮັດໃຫ້ວິທີການເຫຼົ່ານີ້ໄດ້ຖືກເຜີຍແຜ່ອອກ ແລະ ນຳໃຊ້ຢ່າງເປັນເອກະພາບກັນ ແລະ ຍ້ອນໄດ້ຮັບການຊີ້ນຳຢ່າງໃກ້ສິດຈາກ ທ່ານຫົວໜ້າກົມ, ຮອງກົມ ແລະ ການໃຫ້ຄຳຄິດຄຳເຫັນຈາກ ໝູ່ເພື່ອນພາຍໃນກົມ ຈຶ່ງໄດ້ແຕ່ງເພັງ ນີ້ຂຶ້ນມາ.

### 2. ຈຸດປະສົງຂອງການແຕ່ງເພັງນີ້ແມ່ນຫຍັງ?

ຂ້າພະເຈົ້າແມ່ນຜູ້ໜຶ່ງໃນທີມຄູຝຶກ, ເພື່ອໃຫ້ສຳມະນາກອນກຳໄດ້ເນື້ອໃນດີ, ໃນເວລາຝຶກອົບຮົມແມ່ນໄດ້ ຊອກທຸກວິທີທາງໃນການສິດສອນ ແຕ່ຂ້າພະເຈົ້າຄິດວ່າການອະທິບາຍນັ້ນເປັນສ່ວນໜຶ່ງທີ່ເຮັດໃຫ້ເຂົາເຈົ້າເຂົ້າໃຈ , ແຕ່ຖ້າຢາກເຮັດໄດ້ດີກວ່ານັ້ນຄວນມີການໂຄສະນາຜ່ານສື່ຕ່າງໆຕື່ມອີກ ໂດຍສະເພາະແມ່ນສຽງເພັງທີ່ທຸກຄົນສາມາດຟັງໄດ້ໃຫ້ ມີຄວາມມ່ວນຊື່ນ ແລະ ຊວນໃຫ້ຜູ້ຟັງຜູ້ເບິ່ງເຂົ້າໃຈເຖິງເນື້ອໃນຕ່າງໆ, ດັ່ງນັ້ນ ຈຸດປະສົງຫລັກກໍ່ເພື່ອໃຫ້ທ່ານຜູ້ຟັງ ຜູ້ອ່ານເຫັນໄດ້ຄວາມສຳຄັນຂອງວຽກງານປະເມີນຜົນ ຕໍ່ກັບການຄຸ້ມຄອງໂຄງການຕ່າງໆ.

### 3. ມີຄຳເວົ້າໃດບໍ່ທີ່ຈະຝາກເຖິງຜູ້ອ່ານວາລະສານຂອງ PCAP ນີ້?

ຂ້າພະເຈົ້າ ຂໍຝາກຄວາມຮັກຄວາມແພງມາຍັງຜູ້ອ່ານວາລະສານຂອງ ພີແຄັບ 2 ດ້ວຍຄວາມຈິງໃຈ ແລະ ຂອບໃຈຕໍ່ການຮ່ວມໄມ້ຮ່ວມມືທີ່ໄດ້ໃຫ້ຄຳຄິດຄຳເຫັນ ແລະ ຄຳຕຳນິຕິຊົມ ຮ່ວມກັນ ຈົນສາມາດແຕ່ງເພັງນີ້ຂຶ້ນມາ.

ສຸດທ້າຍນີ້ຂໍອວຍພອນໃຫ້ຄະນະນຳຂອງກົມ, ເພື່ອນຮ່ວມງານກົມປະເມີນຜົນ, ພະນັກງານໂຄງການ ພີແຄັບ ແລະ ຊ່ຽວຊານຍີ່ປຸ່ນ ຕະຫຼອດທັງບັນດາການນຳຂອງຂະແໜງການແຜນການທັງຂັ້ນສູກກາງ ແລະ ທ້ອງຖິ່ນ ແລະ ຜູ້ອ່ານທັງຫຼາຍ ຈົ່ງມີສຸຂະພາບເຂັ້ມແຂງ ມີຜົນສຳເລັດໃນໜ້າທີ່ວຽກງານອັນໃໝ່ ແລະ ຍິ່ງໃຫຍ່ກວ່າເກົ່າ.

# ຈາກຄວາມຮູ້ສຶກຂອງທຸກໆຄົນ

ນັບແຕ່ ເດືອນ 4/2008 ທີ່ PCAP2 ໄດ້ເລີ່ມຕົ້ນ ບໍ່ພໍເທົ່າໃດກໍ່ຜ່ານໄປ 3 ປີເຄິ່ງແລ້ວ. ໃນໄລຍະຜ່ານມາ ຂ້າພະເຈົ້າໄດ້ຮັບການສະໜັບສະໜູນຢ່າງຫລວງຫລາຍຈາກຄົນລາວ, ໄດ້ສຳພັດກັບວັດທະນະທຳຂອງແຕ່ລະທ້ອງຖິ່ນ, ຈຶ່ງຮູ້ສຶກໄດ້ວ່າມັກປະເທດລາວຫລາຍ. ຂ້າພະເຈົ້າບໍ່ມີອັນໃດທີ່ຈະດີໃຈໄປກວ່າ ການທີ່ຈະໄດ້ເຫັນຜົນສຳເລັດຂອງ PCAP2 ສາມາດປະກອບສ່ວນເຂົ້າໃນການສ້າງສາປະເທດລາວ. ພ້ອມກັນນັ້ນ, ຂ້າພະເຈົ້າຈະນັບມື້ລໍຖ້າ ທີ່ຈະໄດ້ເຮັດວຽກໃຫ້ແກ່ປະເທດລາວອີກຄັ້ງ. ທ້າຍສຸດນີ້, ຂໍຂອບໃຈບັນດາທ່ານທີ່ໄດ້ຮ່ວມໂຄງການ PCAP2 ນຳກັນມາໝົດທຸກຄົນ. *ຂອບໃຈຫລາຍໆເດີ້!* **(ໂອຊາດະ, ຊ່ຽວຊານ PCAP2)**

ຂ້າພະເຈົ້າຕັ້ງຄວາມຫວັງວ່າ ເຖິງຈະເປັນແບບຄ່ອຍເປັນຄ່ອຍໄປກໍຕາມ ຈະໄດ້ເຫັນລະບົບ PIP ໄດ້ຮັບການປັບປຸງໃຫ້ປະກົດຜົນເປັນຈິງດີຂຶ້ນນັບມື້. ຂອບໃຈທຸກພາກສ່ວນທີ່ກ່ຽວຂ້ອງຫລາຍໆ. **(ໂຕກຸໂຍຊິ, ຊ່ຽວຊານ PCAP2)**

ພາຍໃຕ້ໂຄງການ PCAP2 ໄດ້ໄປຮັບຟັງບັນຫາດ້ານການເງິນຢູ່ແຂວງນັ້ນແຂວງນີ້, ແລະ ຫຼັງຈາກເລີກວຽກແມ່ນໄດ້ຄອງຄອຍຖ້າຫຼິ້ນກິລາຕີບູ້ນຢ່າງໃຈຈົດໃຈຈໍ່.ຄິດວ່າຈະຊ້ອມໃຫ້ເກັ່ງກວ່ານີ້ໜ້ອຍໜຶ່ງ ກ່ອນມາລາວໃນຄັ້ງໜ້າ. **(ຄຸໂຣດະ, ຊ່ຽວຊານ PCAP2)**

ສະບາຍດີ. ໂຄງການ "ພີແຄັບ" ໄດ້ສຳເລັດລົງຢ່າງຄັກແນ່ ບໍ່ມີສິ່ງຄ້າງຄາ, ສົມກັບທີ່ບັນດາຜູ້ກ່ຽວຂ້ອງກັບ PIP ທຸກຄົນແມ່ນໃຜກໍ່ຮູ້ຈັກ ຊື່ຫຍໍ້ "ພີແຄັບ". ສຳລັບໃນໄລຍະທີ 2 ນີ້ແມ່ນໄດ້ມີລະດັບການພັດທະນາທາງດ້ານເຕັກນິກທີ່ຍິ່ງສູງຂຶ້ນ, ຂອບເຂດໃນການເຜີຍແຜ່ກໍ່ກວ້າງຂວາງເປັນທົ່ວປະເທດ; ຊຶ່ງສິ່ງທີ່ເຮັດໃຫ້ໂຄງການໃຫຍ່ນີ້ປະສົບຜົນສຳເລັດ ແມ່ນເປັນຜົນມາຈາກການຮ່ວມແຮງຮ່ວມໃຈຂອງກະຊວງແຜນການ ແລະການລົງທຶນ, ອົງການຮ່ວມມືສາກົນຍີ່ປຸ່ນ, ແຂວງ, ກະຊວງອ້ອມຂ້າງ ແລະ ບັນດາພາກສ່ວນກ່ຽວຂ້ອງຂອງໂຄງການ. ຂ້າພະເຈົ້າຮູ້ສຶກພາກພູມໃຈທີ່ໄດ້ເປັນໜຶ່ງໃນສະມາຊິກຂອງ PCAP2. ຂອບໃຈຫລາຍໆ! **(ໄທຣະ, ຊ່ຽວຊານ PCAP2)**

ເຖິງແມ່ນວ່າ ໄດ້ຮ່ວມໂຄງການ PCAP2 ພຽງແຕ່ໃນປີທີ 4 ເທົ່ານັ້ນ, ພາຍໃນເວລາປີດຽວ ມີຫຼາຍຄັ້ງທີ່ຂ້າພະເຈົ້າຮູ້ສຶກໄດ້ເຖິງຄວາມເປັນທີມເຮັດວຽກທີ່ດີ ລະຫວ່າງ ກະຊວງແຜນການ ແລະ ການລົງທຶນ, ພະແນກແຜນການ ແລະ ການລົງທຶນແຂວງ ແລະ PCAP2. ພ້ອມທັງເຫັນໄດ້ວ່າ ຍ້ອນມີການເຮັດວຽກເປັນທີມຄືດັ່ງກ່າວນັ້ນ ຈຶ່ງເຮັດໃຫ້ໂຄງການນີ້ປະສົບຜົນສຳເລັດໄດ້. ຂໍເປັນກຳລັງໃຈໃຫ້ພະນັກງານກະຊວງແຜນການ ແລະ ການລົງທຶນທຸກໆທ່ານ ສືບຕໍ່ຕັ້ງໜ້າປະຕິບັດໜ້າທີ່ ເພື່ອພັດທະນາປະເທດລາວ. **(ນາກາມຸຣະ, ພະນັກງານປ່ຽນແທນ PCAP2)**

# ລາກ່ອນ

ເວລາທີ່ເຮັດວຽກກັບໂຄງການ ພີແຄັບ 2 ເປັນເວລາທີ່ດີທີ່ສຸດເວລາໜຶ່ງຂອງຂ້າພະເຈົ້າ, ຂ້າພະເຈົ້າໄດ້ຮັບຄວາມຮັກແພງນັບຖືຖານອ້າຍ ນ້ອງ ແລະໝູ່ເພື່ອນຈາກ ອ້າຍນ້ອງພະນັກງານ ຜທ, ຊ່ຽວຊານຍີ່ປຸ່ນ ແລະ ບັນດາທີ່ປຶກສາພາຍໃນດ້ວຍກັນ. ຂ້າພະເຈົ້າໄດ້ຮຽນຮູ້ຫຼາຍຢ່າງ ໂດຍສະເພາະແມ່ນການເຮັດວຽກເປັນທີມ ແລະ ການນຳເອົາຄົນຈາກຫຼາຍຝ່າຍ ຫຼາຍຄວາມຄິດມາເຮັດວຽກຮ່ວມກັນ ເພື່ອບັນລຸຈຸດປະສົງອັນດຽວກັນ, ຂໍໃຫ້ ພີແຄັບ 2 ຈົ່ງໂຊກດີ. **(ສະໝານ ມີບຸນ)**

ຂໍສະແດງຄວາມຂອບໃຈຢ່າງສູງ ມາຍັງພະນັກງານທີ່ກ່ຽວຂ້ອງທຸກໆທ່ານ ທີ່ໄດ້ເຂົ້າຮ່ວມ ແລະ ໃຫ້ການຮ່ວມມື ໃນການເຄື່ອນໄຫວທຸກໆກິດຈະກຳ ຂອງໂຄງການ PCAP2. (**ດວງໃຈ, ທີ່ປຶກສາຝ່າຍລາວ** PCAP2)

ໃນວາລະສິ້ນສຸດໂຄງການນີ້ ຢາກຂໍສະແດງຄວາມຂອບໃຈ ມາຍັງກະຊວງແຜນການ ແລະ ການລົງທຶນ ລວມທັງ ບັນດາສະມາຊິກ PCAP2; ພ້ອມທັງສະແດງຄວາມຍິນດີທີ່ໂຄງການໄດ້ປະສົບຜົນສຳເລັດ. ໂຄງການນີ້ຄົງຈະບໍ່ສຳເລັດໄດ້ ຖ້າປາດສະຈາກຄວາມພະຍາຍາມຢ່າງສູງ. ໃນຊີວິດການເຮັດວຽກທີ່ຜ່ານມາຂອງຂ້າພະເຈົ້າປະສົບການທີ່ຈາກ PCAP2 ແມ່ນຫຼາຍທີ່ສຸດ. ຄືດັ່ງສຸພາສິດຝຼັ່ງທີ່ວ່າ: "ເມື່ອມີໜຶ່ງມີສອງ ກໍ່ຕ້ອງມີສາມ" ຂ້າພະເຈົ້າກໍ່ຫວັງວ່າ PCAP3 ຈະໄດ້ເລີ່ມຕົ້ນໃນໄວໆນີ້. (**ບຸນມີ, ທີ່ປຶກສາຝ່າຍລາວ** PCAP2)

ຂໍສະແດງຄວາມຂອບໃຈໂຄງການ PCAP2 ແລະ ສແດງຄວາມຍິນດີທີ່ໂຄງການປະສົບຜົນສຳເລັດ. (**ບຸນພະໄສ, ເລຂາ** PCAP2 )

ໃນໄລຍະ2ປີທີ່ໄດ້ເຮັດວຽກຢູ່ກົມແຜນການແລະການລົງທຶນ,ເຫັນວ່າຄວາມເຂົ້າໃຈຂອງພະນັກງານຕໍ່PCAP2ນັບມື້ນັບເພີ່ມຂຶ້ນ. ຂໍໃຫ້ນຳໃຊ້ວິທີການທີ່ໄດ້ຮໍ່າຮຽນມາເຂົ້າໃນການວຽກງານຄຸ້ມຄອງການລົງທຶນລັດໃຫ້ດີຂຶ້ນໄປເລື້ອຍໆ **(ນິຊິມຸລະ JOCV ອະດີດDPIແຂວງສາລະວັນ)**

ຂ້າພະເຈົ້າໄດ້ປະສົບການໃນການຂໍງົບປະມານPIP2ຄັ້ງໃນໄລຍະທີ່ປະຕິບັດໜ້າທີ່. ເປັນປະສົບການທີ່ດີແລະມ່ວນທີ່ໄດ້ຮ່ວມໃນການພັດທະນາລາວ. ຫວັງຢ່າງຍິ່ງວ່າ ພະນັກງານDPIແຂວງທຸກຄົນທີ່ໄດ້ຮ່ວມກັນເຄື່ອນໄຫວ ຈະໄດ້ໃຊ້ວິທີການຂອງPCAP ໃນການພັດທະນາຢ່າງມີປະສິດທິພາບແລະເໝາະສົມຕໍ່ກັບສະພາບການຂອງລາວ. **(ອິສິກະ JOCV DPIແຂວງຄຳມ່ວນ)**

ຂ້າພະເຈົ້າໄດ້ເຂົ້າມາຮັບໜ້າທີ່ຢູ່ກົມແຜນການແລະການລົງທຶນແຂວງອຸດົມໄຊໃນວັນທີ່21 ເດືອນ7. ເຖິງວ່າຍັງບໍ່ທັນຊິນເຄີຍແລະຍັງບໍ່ຮູ້ດີກ່ຽວກັບບ່ອນເຮັດວຽກ, ທຳອິດແມ່ນຢາກຮຽນຮູ້ວິທີຄວາມຄິດແລະວິທີການເຮັດວຽກຂອງຄົນລາວ, ຈະພະຍາຍາມເຮັດວຽກພ້ອມທັງຄົ້ນຄິດຮູບແບບເພື່ອໃຫ້ວິທີການຂອງPCAP2ໄດ້ຖືກນຳໃຊ້ຢ່າງມີໝາກຜົນ. **(ອະໂອະໂມະລິ JOCV DPແຂວງອຸດົມໄຊ)**

ຊົມເຊີຍຕໍ່ບັນດາຜູ້ມີສ່ວນຮ່ວມໃນການພັດທະນາຄູ່ມືຄຸ້ມຄອງການລົງທຶນລັດ ນັບແຕ່ຕົ້ນຈົນເຖິງປະຈຸບັນ ໂດຍສະເພາະແມ່ນອົງການ ໄຈກ້າ ແລະ ພີແຄັບ 2 ທີ່ໄດ້ທຸ້ມເທດ້ານທຶນຮອນ ແລະ ສະຕິປັນຍາເຂົ້າໃສ່ວຽກງານດັ່ງກ່າວ ຂໍໃຫ້ວຽກງານດັ່ງກ່າວໄດ້ຖືກນຳໃຊ້ເຂົ້າໃນວຽກງານຕົວຈິງ ແລະ ຍືນຍົງຕະຫຼອດໄປ. (ທ. **ບັນລຸສິດ ຈິດຮູບໂລກ, ຫົວໜ້າພະແນກວິໃຈ ແລະ ຂໍ້ມູນຂ່າວສານ ກົມປະເມີນຜົນ, ຜທ)**

ພີແຄັບ ເປັນຜູ້ໃຫ້ກຳເນີດ ເກີດມີຄູ່ມືຄຸ້ມຄອງການລົງທຶນລັດ ໜີ່ມີປະສິດທິຜົນ ເຮັດໃຫ້ຄົນທົ່ວສັງຄົມຮັບຮູ້ ເຂົ້າສູ່ລະບຽບການ, ລັດຖະບານໃຫ້ຄວາມສຳຄັນ ພ້ແມກັຍຈັດຕັ້ງປະຕິບັດ ແຕ່ລະສົກປີ. ຫວັງຢ່າງຫຍິ່ງວ່າຈະໄດ້ຮັບການຊ່ວຍເຫຼືອ ຈາກ ພີແຄັບ 3 ຕື່ມອີກ, ຂອບໃຈ
**(ທ. ທອງດີ ພົມມະວົງໃຊ, ຮັກສາການຫົວໜ້າພະແນກບໍລິຫານ ແລະ ສັງລວມ, ກົມປະເມີນຜົນ,ຜທ )**

# PCAP2

ຂໍຂອບໃຈ ພີແຄັບ 2 ທີ່ໃຫ້ເຄື່ອງມືຄຸ້ມຄອງ ການລົງທຶນລັດ ທີ່ໜ້າເຊື່ອຖື, ຂໍອວຍພອນໃຫ້ທີມງານ ພີແຄັບ 2 ຈົ່ງມີສຸຂະພາບເຂັ້ມແຂງ ແລະ ສຳເລັດທຸກໜ້າທີ່ວຽກງານ.
**(ທນ.ສົມພັດ ສຸວັນນະວົງ, ຫົວໜ້າພະແນກປະເມີນຜົນຂົງເຂດສັງຄົມ, ກົມປະເມີນຜົນ, ຜທ)**

ຂ້າພະເຈົ້າຮູ້ສຶກດີໃຈທີ່ໄດ້ຮ່ວມງານກັບ ພີແຄັບ, ທັງໂຄງການ ພີແຄັບ 1 ແລະ 2 ໄດ້ຄ່ອຍນຳເອົາບົດຮຽນການຄຸ້ມຄອງການລົງທຶນລັດທີ່ມີຄຸນນະພາບ ແລະ ຝຶກໃຫ້ແກ່ຂ້າພະເຈົ້າ ກໍຄືພະນັກງານຄົນອື່ນໆ. ຂ້າພະເຈົ້າໄດ້ເຂົ້າມາສັງກັດເປັນພະນັກງານຂອງກະຊວງແຜນການໃນປີ 2007 ພໍດີກັບເວລາທີ່ໂຄງການ ກຳລັງສືບຕໍ່ພັດທະນາບັນດາເຄື່ອງມືຕ່າງໆ ເຊິ່ງບໍ່ມີໂຮງຮຽນໃດສອນ, ຖືວ່າເປັນໂຄງການດີ.
**(ທ. ສອນເພັດວົງສີ ບຸດພົມເມືອງ, ພະນັກງານວິຊາການ ພະແນກປະເມີນຜົນຂົງເຂດເສດຖະກິດ, ກົມປະເມີນຜົນ, ຜທ )**

ໂຄງການ ພີແຄັບ 2 ໄດ້ມີຄວາມພະຍາຍາມ ຫຼາຍໃນການທີ່ຈະຫັນເອົາຈາການຄຸ້ມຄອງ ການລົງທຶນລັດໃນເມື່ອກ່ອນທີ່ຂ້ອນຂ້າງບໍ່ຮັດກຸມມາເປັນການຄຸ້ມຄອງ ທີ່ທັນສະໃໝ, ຮັດກຸມ ແລະ ສະດວກສະບາຍ. ໂຄງການ ພີແຄັບ 2 ເປັນໂຄງການຕົວແບບໃນການການຄຸ້ມຄອງການລົງທຶນລັດໃນປະຈຸບັນ ແລະ ອະນາຄົດ. ໃນນາມສ່ວນຕົວ ຂໍສະແດງຄວາມຂອບໃຈ ມາຍັງ ພີແຄັບ 2 ກໍຄື ໄຈກ້າ ພ້ອມດ້ວຍພະນັກງານໂຄງການທຸກຄົນ ທີ່ໃຊ້ຄວາມພະຍາຍາມໃນການປະກອບສ່ວນສ້າງເຄື່ອງມືການຄຸ້ມຄອງການລົງທຶນລັດໃນ ສປປລາວ.
**(ທ. ວິລະພັນ ດວງທອງຄຳ, ຮອງຫົວໜ້າພະແນກບໍລິຫານ ແລະ ສັງລວມ, ກົມປະເມີນຜົນ, ຜທ )**

ຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງຕໍ່ PCAP2 ທີ່ຍາມໃດກໍ່ໃຫ້ການຊ່ວຍເຫຼືອພະນັກງານຄົນລາວ ແລະ ຄົນທ້ອງຖິ່ນ. ໂຄງການ PCAP ແມ່ນໂຄງການທີ່ສຳຄັນ ປະກອບສ່ວນເຂົ້າໃນການພັດທະນາປະເທດລາວ. ພະນັກງານຄົນລາວຈະສາມາດໝູນໃຊ້ຄວາມຮູ້ ກໍ່ຄືບົດຮຽນທີ່ຖອດຖອນໄດ້ຈາກ PCAP ເຂົ້າໃນໂຄງການຕໍ່ໆໄປ. (**ໂພໄຊ, ຂັບລົດ** PCAP2 )

# ຂໍ້ສັງເກດສຸດທ້າຍ ຂະບວນການປ່ຽນແປງເລີ້ມມີໃຫ້ເຫັນຂຶ້ນ



**「ວິທີການຄຸ້ມຄອງການລົງທຶນຂອງລັດໄດ້ຮັບການພັດທະນາຂຶ້ນ ແລະວິທີການດັ່ງກ່າວ ໄດ້ຄ່ອຍໆ ຊຶມຊັບເຂົ້າໄປສູ່ພະນັກງານລັດທີ່ກ່ຽວຂ້ອງທັງໝົດ」**

ວັນທີ່ 31 ເດືອນ 10 ປີ 2004 ຂ້ອຍໄດ້ມາຮອດວຽງຈັນ ແລະ ຂ້ອຍໄດ້ຮັບມອບໝາຍໃຫ້ເຮັດໜ້າທີ່ ອັນຫຍິ່ງໃຫຍ່ຕັ້ງແຕ່ນັ້ນມາ. ໃນຕອນຕົ້ນຂອງການເຮັດວຽກ, ຂ້ອຍຮັບຮູ້ວ່າເປົ້າໝາຍຂອງໂຄງການ ແມ່ນມີຄວາມສຳຄັນສູງ ແລະການໄປເຖິງເປົ້າໝາຍນັ້ນ ແມ່ນໄກ ແລະຕ້ອງໃຊ້ເວລາ. ໃນຄວາມເປັນຈິງ ພວກເຮົາຈະໄປເຖິງຈຸດນັ້ນໄດ້ຫຼືບໍ່ ບັນດາພະນັກງານຜູ້ມີສ່ວນຮ່ວມຈາກກະຊວງແຜນການ ແລະ ການລົງທຶນ ແລະພະນັກງານຂອງໂຄງການ ຕ່າງກໍ່ມີຄວາມກັງວົນ ແລະ ບຸກບືນສືບຕໍ່ໂຄງການຕໍ່ໄປ.

ໂດຍສະເພາະໃນຂະແໜງການນີ້ແລ້ວ, ການສະແດງຜົນໄດ້ຮັບ ທີ່ສາມາດເບິ່ງເຫັນເປັນຮູບຮ່າງ ແມ່ນມີຄວາມຫຍຸ້ງຍາກ. ເຖິງແມ່ນວ່າໜ້າທີ່ທີ່ເຮັດ ແມ່ນກຳລັງເດີນໜ້າໄປໄດ້ດີ ແຕ່ຈະເຮັດໃຫ້ຄົນທົ່ວໄປມີວິໃສທັດໄດ້ນັ້ນ ແມ່ນເປັນເລື້ອງຍາກ. ເຖິງຢ່າງໃດກໍ່ຕາມພາຍໃຕ້ການຊີ້ນຳຈາກກະຊວງແຜນການແລະການລົງທຶນ ວຽກງານນີ້ໄດ້ຖືເປັນໜ້າທີ່ທີ່ມີຄວາມສຳຄັນຫຼາຍ ຕໍ່ການພັດທະນາປະເທດຊາດ. ຂ້ອຍໄດ້ສັງເກດເຫັນວ່າ ບັນດາບົດບາດຂອງ ພະນັກງານແມ່ນ ຂຶ້ນກັບໂອກາດຂອງກຳລັງແຮງທີ່ມາຈາກ ໜ່ວຍງານດ້ານລຸ່ມ ຊຶ່ງໄດ້ຮັບການຮ່ວມມື ແລະເລີ້ມຕົ້ນມາຕັ້ງແຕ່ ໄລຍະທຳອິດຂອງໂຄງການ ຈົນແກ່ຍາວມາໄດ້ 7 ປີແລ້ວ。

ມາຮອດປະຈຸບັນ ຜົນຂອງໂຄງການກໍ່ໄດ້ເລີ້ມເຫັນເປັນຮູບເປັນຮ່າງຂຶ້ນມາແລ້ວ.

ບຸກຄະລາກອນທີ່ມີສ່ວນຮ່ວມໂດຍກົງກັບໂຄງການການລົງທຶນຂອງລັດ, ຫຼື ພະນັກງານທີ່ພົວພັນໂດຍກົງກັບໂຄງການ ແມ່ນໄດ້ເຫັນໝາກຜົນຢ່າງຊັດເຈນ ຂອງການປ່ຽນແປງທີ່ເກີດມາຈາກໂຄງການນີ້. ຈາກວຽກງານທີ່ເຄີຍຄຸມເຄືອເວົ້າກັນວ່າ 「ຈະຕ້ອງເຮັດໃຫ້ມີໝາກຜົນອອກມາ」, ແຕ່ໝາກຜົນອັນນັ້ນແມ່ນໃຊ້ຫຍັງເປັນໂຕວັດ, ມາຮອດປະຈຸບັນພະນັກງານທັງໝົດ ແມ່ນມີຄວາມສາມາດເວົ້າໄດ້ກົງກັນ, ຫຼືມີຄວາມສາມາດເຂົ້າໃຈໄດ້ກົງກັນ ກ່ຽວກັບໝາກຜົນຂອງໂຄງການ.

ຖ້າກ່າວອີກຢ່າງໜຶ່ງກໍ່ຄື, ໃນຊ່ວງໄລຍະ7ປີທີ່ຜ່ານມາ ຂ້ອຍຄິດວ່າສິ່ງສຳຄັນທີ່ເໜືອກວ່າການສ້າງໝາກຜົນຂອງໂຄງການໃຫ້ເປັນຮູບເປັນຮ່າງຂຶ້ນມາ, ກໍ່ຄື ການສ້າງຂະບວນການປ່ຽນແປງໃໝ່ (NEW MOVEMENT) ໃຫ້ເກີດຂຶ້ນ. ການສ້າງຕັ້ງຂະບວນການປ່ຽນແປງໃໝ່ຂຶ້ນມານັ້ນ ຂ້ອຍຄິດວ່າມັນເປັນບົດບາດໜ້າທີ່ການປະສານງານຂອງໜ່ວຍງານດ້ານເຕັກນິກ ຊຶ່ງແມ່ນສ່ວນໜຶ່ງໃນການເຮັດໃຫ້ເກີດຂະບວນການປ່ຽນແປງໃໝ່ດັ່ງກ່າວ.

ເມື່ອສ້າງຂະບວນການປ່ຽນແປງໃໝ່ດັ່ງກ່າວ ພາຍຫຼັງການສິ້ນສຸດໂຄງການແລ້ວ, ສິ່ງນັ້ນຈະກາຍເປັນໝາກຜົນ、ແລະເປັນການປ່ຽນແປງທີ່ຍືນຍົງ, ແລະພວກເຮົາຈະສາມາດເບິ່ງເຫັນໝາກຜົນຂອງໂຄງການທີ່ມີປະສິດທິພາບສູງຕໍ່ພະນັກງານ. ນອກຈກນັ້ນພວກເຮົາຍັງສາມາດປະກາດໄດ້ຢ່າງພູມໃຈວ່າ「ໂຄງການນີ້ແມ່ນມີປະໂຫຍດຕໍ່ກັບການພັດທະນາປະເທດຊາດ」.

ຂໍຂອບໃຈ ມາຍັງບັນດາ ທ່ານຫົວໜ້າ ທີ່ມາຈາກພະແນກແຜນການ ແລະ ການລົງທຶນ ທີ່ນຳທີມ ແລະ ກໍ່ໃຫ້ເກີດຂະບວນການປ່ຽນແປງ, ບັນດາພະນັກງານທັງໝົດຈາກພະແນກແຜນການ ແລະ ການລົງທຶນທີ່ຊ່ວຍກັນເຮັດໃຫ້ເກີດຂະບວນການປ່ຽນແປງດັ່ງກ່າວ, ແລະບັນດາພະນັກງານທັງໝົດໃນແຕ່ລະກະຊວງກົມກອງ ຈາກທົ່ວປະເທດ ທີ່ເຂົ້າຮ່ວມຂະບວນການປ່ຽນແປງນີ້. ຈາກການເຮັດວຽກໂຄງການເປັນທີມ, ຂ້ອຍມີຄວາມຮູ້ສຶກເປັນກຽດ ຕໍ່ໝາກຜົນທີ່ໄດ້ຮັບມາຮອດປະຈຸບັນ.

ຂະບວນການປ່ຽນແປງນີ້ ຍັງຈະດຳເນີນສືບຕໍ່ໄປ

## ● ບັນທຶກຈາກບັນນາທິການ ●

ໂຄງການ PCAP2 ແມ່ນດຳເນີນໄປໄດ້ໄລຍະ 3 ປີເຄິ່ງ ພາຍໃຕ້ ບັນຍາກາດ ອັນອົບອຸ່ນ ແລະການດູແລເບິ່ງແຍ່ງເປັນຢ່າງດີ, ໂດຍສະເພາະແມ່ນການໄດ້ຮັບການສະໜັບສະໜູນຈາກບັນດາທ່ານທັງຫຼາຍ, ຂ້າພະເຈົ້າຂໍຖືໂອກາດຂອບໃຈທ່ານມານະທີ່ນີ້.

ໂຄງການJICAຍັງຈະສືບຕໍ່ສະໜັບສະໜູນໂຄງການ MPI、ເພື່ອພັດທະນາປະເທດລາວ、ພວກເຮົາມີແຜນຈະພັດທະນາເທັກໂນໂລຍີ ໃນການຈັດການ PIP。 (ບົດຄວາມ:PCAP2 ທັງໝົດ)

ຫ້ອງການຂອງໂຄງການຈະທຳການປິດ ໃນທ້າຍເດືອນ 8 ນີ້. ຂໍຂອບໃຈ ທຸກທ່ານ ທີ່ສະໜັບສະໜູນໂຄງການນີ້ມາໂດຍຕະຫຼອດ.

**【ສອບຖາມລາຍລະອຽດ · ບ່ອນຕິດຕໍ່】**

- ຫ້ອງການໂຄງການ : Ministry of Planning and Investment, Avenue Souphanouvong, Vientiane
- ທີ່ຢູ່ໄປສະນີ : C/O JICA Laos Office, P.O.Box 3933, Avenue Souphanouvong, Vientiane
- ໂທ・ແຟກ : ＋856(0)21.243.687
- ອີເມລ: pcap2@icnet.co.jp
- ໂຮມເພດ : http://www.jica.go.jp/project/english/laos/0700667/index.html